**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0675/ກປ

ນະຄອນຫຼວງວຽງຈັນ, ວັນທີ 22 JAN 2025

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງໂຮງງານຜະລິດອາຫານສັດ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍອາຫານສັດ ສະບັບເລກທີ/02 ລບ, ລົງວັນທີ 02 ມັງກອນ 2020;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 6107/ກລປ, ລົງວັນທີ 14 ຕຸລາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງ ສະບັບເລກທີ 5533/ຫກ, ລົງວັນທີ 24 ທັນວາ 2024.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງ ສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຮງງານຜະລິດອາຫານສັດ ເພື່ອເຮັດໃຫ້ການດຳເນີນງານຂອງໂຮງງານຜະລິດອາຫານສັດ ຖືກຕ້ອງຕາມການປະຕິບັດງານການຜະລິດທີ່ດີ ແນໃສ່ຮັບປະກັນໃຫ້ອາຫານສັດ ມີຄຸນນະພາບ, ປອດໄພ ສຳລັບການລ້ຽງສັດ ໂດຍສອດຄ່ອງກັບ ລະບຽບການຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ພ້ອມທັງເປັນການປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ໃຫ້ຂະຫຍາຍຕົວ.

**ມາດຕາ 2 ການຄຸ້ມຄອງໂຮງງານຜະລິດອາຫານສັດ**

ການຄຸ້ມຄອງໂຮງງານຜະລິດອາຫານສັດ ແມ່ນ ຂະບວນການຄວບຄຸມ ກ່ຽວກັບ ການຈັດຕັ້ງ, ການສ້າງຕັ້ງ, ການດຳເນີນງານ, ການກວດກາ, ຕິດຕາມ ການຜະລິດອາຫານສັດ ທີ່ມີຄຸນນະພາບ ແລະ ປະສິດທິຜົນ ຂອງຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ. ລວມທັງການຄຸ້ມຄອງກໍ່ສ້າງໂຮງເຮືອນ, ປະກອບເຄື່ອງມື ແລະ ບຸກຄະລາກອນສະເພາະດ້ານ ຢ່າງຄົບຊຸດ ເພື່ອດຳເນີນການປຸງແຕ່ງ, ບັນຈຸ, ຫຸ້ມຫໍ່, ເກັບຮັກສາ ແລະ ການຈຳໜ່າຍ ອາຫານສັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນ ຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອາຫານສັດ** ໝາຍເຖິງ ວັດຖຸທີ່ສັດ ສາມາດ ກິນໄດ້ ຊຶ່ງປະກອບດ້ວຍ ວັດຖຸທີ່ຖືກປຸງແຕ່ງເປັນແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ທີ່ສາມາດໃຊ້ເຂົ້າໃນການລ້ຽງສັດ ແລະ ສັດນ້ຳ ເພື່ອໃຫ້ໄດ້ຜົນຜະລິດຕາມທີ່ຕ້ອງການ;
2. **ວັດຖຸດິບ** ໝາຍເຖິງ ສານໃດໆກໍ່ຕາມທີ່ໃຫ້ໂພຊະນາການ ທີ່ເກີດປະໂຫຍດແກ່ສັດ ທີ່ກິນເຂົ້າໄປ ໂດຍວັດຖຸດິບອາຫານສັດ ອາດຈະໄດ້ມາຈາກແຫຼ່ງທຳມະຊາດ ເຊັ່ນ: ພືດ, ສັດ ອື່ນໆ ຫຼື ອາດໄດ້ຈາກການສັງເຄາະເຄມີ ເຊັ່ນ: ກົດອາມີໂນ, ວິຕາມິນຕ່າງໆ ຫຼື ທາງຊີວະ ເຊັ່ນ: ໂປຣຕີນໄດ້ຈາກພືດ ແລະ ສັດ;
3. **ການຜະລິດອາຫານສັດ** ໝາຍເຖິງ ການນຳເອົາວັດຖຸດິບ ທີ່ໄດ້ຈາກພືດ ແລະ ສັດ (ເມັດ, ຜົງຫຍາບ, ຜົງລະອຽດ, ຜົງປະສົມ, ຂອງແຫຼວ, ກາກນ້ຳຕານ ອື່ນໆ) ທີ່ແຕກຕ່າງກັນ ດ້ວຍການນຳໄປ ສີ, ບົດ, ປ້ອນ ແລະ ຊັ່ງນ້ຳໜັກ ຖືກປະສົມເຂົ້າກັນ ເພື່ອໃຫ້ໄດ້ຜະລິດຕະພັນອາຫານສັດ ປະເພດຕ່າງໆ;
4. **ສິ່ງເສດເຫຼືອ** ໝາຍເຖິງ ສິ່ງທີ່ເກີດຂຶ້ນ ໃນໄລຍະການກໍ່ສ້າງ, ດຳເນີນ ແລະ ຢຸດເຊົາກິດຈະການໂຮງງານຜະລິດອາຫານສັດ ທີ່ບໍ່ສາມາດນຳໃຊ້ໄດ້ ເປັນຕົ້ນ ສິ່ງເສດເຫຼືອປະເພດ ແຂງ, ແຫຼວ ແລະ ອາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການ ກ່ຽວກັບ ໂຮງງານຜະລິດອາຫານສັດ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງໂຮງງານຜະລິດອາຫານສັດ

**ມາດຕາ 5 ການຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ**

ການຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ແມ່ນ ການກະກຽມປະກອບເອກະສານ ແລະ ສ້າງບົດວິພາກເສດຖະກິດ-ເຕັກນິກ ໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ມາດຕະຖານເຕັກນິກໂຮງງານຜະລິດອາຫານສັດ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍການຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ຕ້ອງສະເໜີເຈດຈຳນົງຫາ ກະຊວງກະສິກຳ ແລະ ປ່າໄມ້ ສຳລັບ ການຜະລິດອາຫານສັດ ສີ່ພັນໂຕນ ຕໍ່ປີ ຂຶ້ນໄປ ແລະ ການຜະລິດອາຫານສັດ ໜ້ອຍກວ່າ ສີ່ພັນໂຕນ ຕໍ່ປີ ໃຫ້ສະເໜີຫາ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເພື່ອຄົ້ນຄວ້າເຫັນດີທາງດ້ານຫຼັກການ.

**ມາດຕາ 6 ເງື່ອນໄຂການຂໍອະນຸຍາດ ສ້າງຕັ້ງໂຮງງານຜະລິດອາຫານສັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງໂຮງງານຜະລິດອາຫານສັດ ມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ;
2. ມີງົບປະມານການລົງທຶນ, ເຄື່ອງຈັກ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້;
3. ມີນັກວິຊາການທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບ ການຜະລິດອາຫານສັດ;
4. ມີພື້ນທີ່ສ້າງຕັ້ງໂຮງງານ ແລະ ພື້ນທີ່ການຜະລິດ ຫຼື ແຫຼ່ງວັດຖຸດິບ;
5. ມີເງື່ອນໄຂອື່ນ ກ່ຽວກັບ ການດຳເນີນກິດຈະການສ້າງຕັ້ງໂຮງງານຜະລິດອາຫານສັດ.

**ມາດຕາ 7 ເອກະສານຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ**

ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກໍານົດ;
2. ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້ ກ່ຽວກັບ ອາຫານສັດ;
3. ສໍາເນົາ ບັດປະຈໍາຕົວ ຫຼື ປຶ້ມສໍາມະໂນຄົວ ຫຼື ໜັງສືເດີນທາງ ຖ້າເປັນຄົນຕ່າງປະເທດ;
4. ໃບອະນຸຍາດປະກອບອາຊີບຢູ່ ສປປ ລາວ ຖ້າເປັນຄົນຕ່າງປະເທດ;
5. ໃບຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ ພ້ອມດ້ວຍ ບົດສະບັບສົມບູນ;
6. ສໍາເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນການລົງທຶນ;
7. ໃບຢັ້ງຢືນສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
8. ໃບຢັ້ງຢືນແບບກໍ່ສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
9. ສໍາເນົາ ໃບຕາດິນ ຫຼື ໃບສັນຍາເຊົ່າທີ່ດິນ ຫຼື ໃບມອບກໍາມະສິດທີ່ດິນ;
10. ໃບແຈ້ງໂທດ.

**ມາດຕາ 8 ການກວດກາກ່ອນອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ**

ການກວດກາກ່ອນອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການກວດກາ ໂຮງງານຜະລິດອາຫານສັດ ທີ່ມີກໍາລັງການຜະລິດໄດ້ ຫຼາຍກ່ວາ ສີ່ພັນໂຕນ ຕໍ່ປີ ຂຶ້ນໄປ ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ, ສໍາລັບ ໂຮງງານຜະລິດອາຫານສັດ ທີ່ມີກໍາລັງການຜະລິດໄດ້ ບໍ່ເກີນ ສີ່ພັນໂຕນ ຕໍ່ປີ ມອບໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນໃຈກາງ ໃນການແຕ່ງຕັ້ງ ຄະນະວິຊາການກວດກາສະເພາະກິດ ໂດຍໃຫ້ປະກອບດ້ວຍ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ, ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ, ຂະແໜງການທີ່ກ່ຽວຂ້ອງ ພ້ອມທັງ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ຈະຕັ້ງໂຮງງານຜະລິດອາຫານສັດ;
2. ດໍາເນີນການກວດກາເອກະສານ;
3. ລົງກວດກາສະຖານທີ່ຕົວຈິງ ຮ່ວມກັບ ພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນ;
4. ສ້າງບົດບັນທຶກ ແລະ ລາຍງານຜົນການກວດກາ ເປັນລາຍລັກອັກສອນໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ລາຍງານຫາ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຊາບ ພາຍໃນ ສາມ ວັນລັດຖະການ;
5. ພາຍຫຼັງ ໄດ້ຮັບບົດລາຍງານຈາກ ຄະນະວິຊາການກວດກາສະເພາະກິດ ແລ້ວ ໃຫ້ ກົມລ້ຽງສັດ ແລະ ການປະມົງ ລາຍງານຕໍ່ ກະຊວງກະສິກໍາ ແລະ ປ່າໄມ້, ສໍາລັບ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ໃຫ້ລາຍງານ ອົງການປົກຄອງແຂວງ ເພື່ອພິຈາລະນາ.

**ມາດຕາ 9 ການພິຈາລະນາ ອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ**

ກະຊວງກະສິກໍາ ແລະ ປ່າໄມ້ ຫຼື ອົງການປົກຄອງແຂວງ ພິຈາລະນາ ການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ ສິບ ວັນລັດຖະການ ນັບແຕ່ ວັນທີ່ໄດ້ຮັບບົດລາຍງານຈາກກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ. ໃນກໍລະນີ ບໍ່ອະນຸຍາດສ້າງຕັ້ງຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດ ຮັບຊາບ.

**ມາດຕາ 10 ການອະນຸຍາດໃຫ້ລົງມືກໍ່ສ້າງ ໂຮງງານຜະລິດອາຫານສັດ**

ຜູ້ຂໍອະນຸຍາດທີ່ໄດ້ຮັບ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ຈາກ ກະຊວງກະສິກໍາ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ແລ້ວ ໃຫ້ດໍາເນີນການກໍ່ສ້າງຕາມແບບທີ່ໄດ້

ຮັບຮອງ ຈາກຂະແໜງການ ທີ່ກ່ຽວຂ້ອງ ບໍ່ເກີນ ເກົ້າສິບວັນ ນັບແຕ່ວັນທີ່ໄດ້ຮັບ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ. ຖ້າຫາກບໍ່ສາມາດລົງມືກໍ່ສ້າງໄດ້ ໃຫ້ແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ.

**ມາດຕາ 11 ການລາຍງານຄວາມຄືບໜ້າ ຂອງການກໍ່ສ້າງໂຮງງານຜະລິດອາຫານສັດ**

ຜູ້ໄດ້ຮັບອະນຸຍາດ ໃຫ້ລົງມືກໍ່ສ້າງ ໂຮງງານຜະລິດອາຫານສັດ ຕ້ອງແຈ້ງໃຫ້ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ ເພື່ອແຕ່ງຕັ້ງຄະນະລົງກວດກາ ແລະ ສ້າງບົດລາຍງານຮ່ວມກັນຢ່າງໜ້ອຍ ສາມ ຄັ້ງ ດັ່ງນີ້:

1. ຄັ້ງທຳອິດ ເມື່ອການກໍ່ສ້າງ ສຳເລັດ ສາມສິບ ສ່ວນຮ້ອຍ;
2. ຄັ້ງທີສອງ ເມື່ອການກໍ່ສ້າງ ສຳເລັດ ຫົກສິບ ສ່ວນຮ້ອຍ;
3. ຄັ້ງທີສາມ ເມື່ອການກໍ່ສ້າງ ສຳເລັດ ຮ້ອຍ ສ່ວນຮ້ອຍ.

## ໝວດທີ 3
## ການດຳເນີນກິດຈະການໂຮງງານຜະລິດອາຫານສັດ

**ມາດຕາ 12 ການຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ພາຍຫຼັງກໍ່ສ້າງໂຮງງານຜະລິດອາຫານສັດສຳເລັດແລ້ວ ກ່ອນຈະດຳເນີນການຜະລິດ ຕ້ອງຂໍໃບຢັ້ງຢືນການດຳເນີນກິດຈະການຜະລິດອາຫານສັດ ຈາກກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

**ມາດຕາ 13 ເງື່ອນໄຂການຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ການຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ມີເງື່ອນໄຂ ດັ່ງນີ້:

1. ສຳເລັດການກໍ່ສ້າງໂຮງງານຜະລິດອາຫານສັດ ໂດຍສົມບູນ ເປັນຕົ້ນ ສຳເລັດການກໍ່ສ້າງອາຄານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສິ່ງອຳນວຍຄວາມສະດວກດ້ານ ສຸຂານາໄມ, ມີລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດ ພາຍໃນໂຮງງານ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ;
2. ສຳເລັດການທົດລອງຜະລິດ ແລະ ກວດກາຄຸນນະພາບ;
3. ສຳເລັດການຂຶ້ນທະບຽນອາຫານສັດ.

**ມາດຕາ 14 ການທົດລອງຜະລິດອາຫານສັດ**

ການດຳເນີນ ທົດລອງຜະລິດອາຫານສັດ ຕ້ອງຂໍອະນຸຍາດການຜະລິດທົດລອງ ໂດຍການຍື່ນຄຳຮ້ອງຕໍ່ກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາ ພ້ອມທັງ ປະກອບຕົວຢ່າງ ແລະ ເອກະສານ ດັ່ງນີ້:

1. ສະຫຼາກ ແລະ ຕົວຢ່າງ ເປົາບັນຈຸອາຫານສັດທຸກຂະໜາດ ໜຶ່ງຊຸດ;
2. ເອກະສານກຳກັບການຜະລິດອາຫານສັດ ຄົບໜຶ່ງຊຸດ;
3. ຕົວຢ່າງອາຫານສັດ ນ້ຳໜັກຢ່າງໜ້ອຍ ຫ້າຮ້ອຍ ກຼາມ.

ພາຍຫຼັງທີ່ໄດ້ຮັບການອະນຸຍາດແລ້ວ ອາຫານສັດທີ່ຜະລິດ ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ, ແຈກຢາຍ ຫຼື ຂາຍຜະລິດຕະພັນ ແຕ່ສາມາດນຳໃຊ້ ສຳລັບ ການທົດລອງການລ້ຽງສັດຂອງຕົນເທົ່ານັ້ນ.

**ມາດຕາ 15 ການຂຶ້ນທະບຽນອາຫານສັດ**

ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ທົດລອງຜະລິດອາຫານສັດແລ້ວ, ອາຫານສັດດັ່ງກ່າວ ແມ່ນໄດ້ຜ່ານການກວດກາຄຸນນະພາບຢູ່ໃນໂຮງງານແລ້ວ, ກ່ອນຈະດຳເນີນການຂໍ ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດອາຫານສັດ ເພື່ອຈຳໜ່າຍ ຕ້ອງໄດ້ເອົາຜະລິດຕະພັນ ດັ່ງກ່າວ ໄປຂຶ້ນທະບຽນນຳ ກົມລ້ຽງສັດ ແລະ ການປະມົງ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດ ວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020 ແລະ ຄູ່ມື ສຳລັບ ການຂຶ້ນທະບຽນອາຫານສັດ ສະບັບເລກທີ 1594/ກປ, ລົງວັນທີ 06 ມີນາ 2023.

**ມາດຕາ 16 ການຂໍອະນຸຍາດອອກພາຊະນະບັນຈຸອາຫານສັດ**

ກ່ອນການດຳເນີນການຜະລິດອາຫານສັດ ຜູ້ຜະລິດອາຫານສັດ ຕ້ອງອອກແບບພາຊະນະບັນຈຸອາຫານສັດ ປະເພດຕ່າງໆ ແລ້ວສະເໜີຫາ ກົມລ້ຽງສັດ ແລະ ການປະມົງ ພິຈາລະນາຮັບຮອງ.

**ມາດຕາ 17 ການປະກອບເອກະສານຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ການສະເໜີຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ປະກອບມີ ເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນການຜະລິດອາຫານສັດ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈຳນວນ 04 ໃບ ຮູບຖ່າຍຕ້ອງບໍ່ເກີນ 03 ເດືອນ;
2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ ຂອງກະຊວງ ກປ;
3. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
4. ລາຍການເຄື່ອງຈັກຕົ້ນຕໍໃນໂຮງງານ;
5. ແຜນການເຄື່ອນໄຫວປະຈຳປີ;
6. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
7. ໃບຢັ້ງຢືນ ຜົນການຜະລິດ ແລະ ກວດກາຄຸນນະພາບ ຂັ້ນທົດລອງ;
8. ໃບທະບຽນອາຫານສັດ.

**ມາດຕາ 18 ການກວດກາ ແລະ ປະເມີນ ໂຮງງານຜະລິດອາຫານສັດ ກ່ອນການອອກ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດລິດອາຫານສັດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງ ສະບັບນີ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນໃຈກາງ ແຕ່ງຕັ້ງຄະນະວິຊາການ ເພື່ອລົງກວດກາ ການດຳເນີນການຜະລິດທົດລອງ ຂອງໂຮງງານຜະລິດອາຫານສັດ ພ້ອມທັງເຮັດບົດລາຍງານ ໃຫ້ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພາຍໃນ ຫ້າ ວັນລັດຖະການ .

ໃນກໍລະນີພົບເຫັນ ໂຮງງານຜະລິດອາຫານສັດ ປະຕິບັດບໍ່ສອດຄ່ອງກັບ ມາດຖານເຕັກນິກ ຄະນະວິຊາການ ຕ້ອງໃຫ້ຄຳແນະນຳ ເພື່ອປັບປຸງ ແລະ ແກ້ໄຂ ພາຍໃນເວລາທີ່ກຳນົດ ພ້ອມທັງເຮັດບົດບັນທຶກຜົນການກວດກາ ແລະ ລາຍງານ ໃຫ້ກົມລ້ຽງສັດ ແລະ ການປະມົງ ຊາບໂດຍດ່ວນ. ໃນກໍລະນີ ບໍ່ສາມາດປັບປຸງທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບລ່ວງໜ້າ ກ່ອນວັນສິ້ນສຸດ ຂອງກຳນົດເວລາ ທີ່ຄະນະວິຊາການແນະນຳ. ພາຍຫຼັງເຈົ້າຂອງໂຮງງານຜະລິດອາຫານສັດ ໄດ້ປັບປຸງຕາມການແນະນຳ ຂອງຄະນະວິຊາການ ຕາມບົດບັນທຶກແລ້ວ ໃຫ້ສະເໜີຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ

**ມາດຕາ 20 ການນຳໃຊ້ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ສາມາດນຳໃຊ້ເປັນເອກະສານສະແດງ ສຳລັບ ການຈຳໜ່າຍອາຫານສັດ ທີ່ຕົນເອງຜະລິດ ລວມທັງ ສາມາດນຳໃຊ້ສຳລັບ ການນຳເຂົ້າວັດຖຸດິບ , ອຸປະກອນ ເພື່ອນຳມາຂະຫຍາຍການກໍ່ສ້າງ ແລະ ດຳເນີນການຜະລິດອາຫານສັດ, ແຕ່ບໍ່ສາມາດນຳໃຊ້ໄດ້ ສຳລັບ ການນຳເຂົ້າອາຫານສັດ ຫຼື ຄ້າຂາຍອາຫານສັດ ທີ່ບໍ່ແມ່ນຜະລິດຕະພັນຂອງຕົນໄດ້.

**ມາດຕາ 21 ອາຍຸ ແລະ ການຕໍ່ອາຍຸ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ສາມາດນຳໃຊ້ໄດ້ ສາມປີ ນັບແຕ່ວັນທີ່ອອກໃບຢັ້ງຢືນ ເປັນຕົ້ນໄປ. ກ່ອນໃບຢັ້ງຢືນຈະໝົດອາຍຸ ສາມສິບ ວັນ ຜູ້ທີ່ໄດ້ຮັບໃບຢັ້ງຢືນ ຕ້ອງຍື່ນຄຳຮ້ອງ ເພື່ອຂໍຕໍ່ອາຍຸນຳ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ. ການພິຈາລະນາ ຕໍ່ ຫຼື ບໍ່ໃຫ້ຕໍ່ໃບຢັ້ງຢືນ ຕ້ອງພິຈາລະນາບໍ່ໃຫ້ເກີນ ສິບຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບການສະເໜີ.

**ມາດຕາ 22 ການໂຈະ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນການຜະລິດອາຫານສັດ;
2. ບໍ່ປະຕິບັດ ຕາມການແຈ້ງ ຂອງອົງການຄຸ້ມຄອງ ແລະ ກວດກາອາຫານສັດ ກ່ຽວກັບ ການປັບປຸງການປະຕິບັດເງື່ອນໄຂ, ມາດຕະຖານເຕັກນິກ ແລະ ຄຸນນະພາບການດຳເນີນການຜະລິດອາຫານສັດ;
3. ດຳເນີນການຜະລິດອາຫານສັດ ບໍ່ຖືກຕ້ອງຕາມການອະນຸຍາດ.

ການໂຈະ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ແມ່ນເພື່ອໃຫ້ຜູ້ໄດ້ຮັບອະນຸຍາດຜະລິດອາຫານສັດ ປັບປຸງແກ້ໄຂພາຍໃນເວລາ ເກົ້າສິບ ວັນລັດຖະການ ໃນກໍລະນີ ຜູ້ຜະລິດອາຫານສັດ ບໍ່ສາມາດປັບປຸງແກ້ໄຂ ພາຍໃນເວລາທີ່ກຳນົດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ແຈ້ງໂຈະ ຊາບ.

**ມາດຕາ 23 ການຍົກເລີກ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນການຜະລິດອາຫານສັດ;
2. ບໍ່ປະຕິບັດຕາມການແຈ້ງໂຈະ ໂດຍບໍ່ມີເຫດຜົນພຽງພໍ;
3. ດຳເນີນການຜະລິດອາຫານສັດ ທີ່ສົ່ງຜົນກະທົບຮ້າຍແຮງ ຕໍ່ສຸຂະພາບສັດ ຫຼື ຜູ້ບໍລິໂພກ.

**ມາດຕາ 24 ການຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ຄືນໃໝ່**

ກໍລະນີ ໃບຢັ້ງຢືນ ເສຍຫາຍ ຫຼື ຖືກທຳລາຍ ຜູ້ໄດ້ຮັບໃບຢັ້ງຢືນ ຕ້ອງແຈ້ງຕໍ່ອົງການທີ່ອອກໃບຢັ້ງຢືນໂດຍດ່ວນ ແລະ ປະກອບເອກະສານ ເພື່ອສະເໜີຂໍຮັບໃບຢັ້ງຢືນຄືນໃໝ່ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ວັນທີໃບຢັ້ງຢືນເສຍຫາຍ ຫຼື ຖືກທຳລາຍ. ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ຕ້ອງອອກ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ສະບັບໃໝ່ ພາຍໃນສາມສິບ ວັນລັດຖະການ.

**ມາດຕາ 25 ການຜະລິດ ແລະ ການຈຳໜ່າຍອາຫານສັດ**

ທຸກລາຍການອາຫານສັດ ກ່ອນຜະລິດ ແລະ ຈຳໜ່າຍ ຕ້ອງໄດ້ຂຶ້ນທະບຽນ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ. ສະຖານທີ່ ຜະລິດ, ຈຳໜ່າຍ ແລະ ການດຳເນີນກິດຈະການ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການຄຸ້ມຄອງ ແລະ ກວດກາວຽກງານອາຫານສັດ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 26 ມາດຕະຖານການປະຕິບັດງານທີ່ດີ ຂອງໂຮງງານຜະລິດອາຫານສັດ**

ໂຮງງານຜະລິດອາຫານສັດ ຕ້ອງປະຕິບັດຕາມມາດຕະຖານການປະຕິບັດງານທີ່ດີ ສຳລັບ ໂຮງງານຜະລິດອາຫານສັດ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມທັງໃຫ້ສອດຄ່ອງກັບ ມາດຕະຖານ ຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເປັນຕົ້ນ ທີ່ຕັ້ງ, ອຸປະກອນ, ອາຄານ, ສະຖານທີ່ຜະລິດ, ສິ່ງອຳນວຍຄວາມສະດວກ, ວັດຖຸປະກອນ ການຄຸ້ມຄອງການຜະລິດ ແລະ ກວດກາຄຸນນະພາບ, ການເກັບຮັກສາ, ການປະຕິບັດ ມາດຕະການດ້ານສຸຂານາໄມ, ບຸກຄະລາກອນ ແລະ ການບັນທຶກ.

**ມາດຕາ 27 ການໂຄສະນາອາຫານສັດ**

ການໂຄສະນາອາຫານສັດ ຕ້ອງໃຫ້ຖືກກັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບຢັ້ງຢືນ. ເນື້ອໃນການໂຄສະນາ ຕ້ອງໃຫ້ ຊັດເຈນ, ຖືກຕາມຄຸນລັກສະນະ, ຄຸນນະພາບ ແລະ ຫຼີກລ່ຽງ ການໂຄສະນາເກີນຄວາມຈິງ ທີ່ເປັນການບິດເບືອນ ຫຼອກລວງຜູ້ອື່ນໃຫ້ຫຼົງເຊື່ອ.

ຜູ້ທີ່ມີຈຸດປະສົງ ໂຄສະນາ ກ່ຽວກັບ ອາຫານສັດ ຕ້ອງຂໍອະນຸຍາດ ຈາກກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ.

## ໝວດທີ 4
## ການປ່ຽນແປງກິດຈະການ ໂຮງງານຜະລິດອາຫານສັດ

**ມາດຕາ 28 ການປ່ຽນແປງກິດຈະການ ໂຮງງານຜະລິດອາຫານສັດ**

ການປ່ຽນແປງກິດຈະການ ໂຮງງານຜະລິດອາຫານສັດ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານຜະລິດອາຫານສັດ;
2. ການໂອນ, ເຊົ່າ ຫຼື ຂາຍ ກິດຈະການໂຮງງານ;
3. ການສືບທອດ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ;
4. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ.

**ມາດຕາ 29 ການຂະຫຍາຍໂຮງງານຜະລິດອາຫານສັດ**

ເຈົ້າຂອງໂຮງງານຜະລິດອາຫານສັດ ສາມາດຂະຫຍາຍໂຮງງານຜະລິດອາຫານສັດໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດຈາກ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ພ້ອມທັງ ປະກອບ

ເອກະສານ ແລະ ປະຕິບັດຂັ້ນຕອນການຂໍອະນຸຍາດ ໃນສ່ວນທີ່ຈະຂະຫຍາຍ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 30 ການໂອນ, ເຊົ່າ ຫຼື ຂາຍກິດຈະການໂຮງງານຜະລິດອາຫານສັດ**

ໃນກໍລະນີ ເຈົ້າຂອງໂຮງງານຜະລິດອາຫານສັດ ມີຈຸດປະສົງ ໂອນ, ເຊົ່າ ຫຼື ຂາຍກິດຈະການໂຮງງານ ໃຫ້ຜູ້ອື່ນ ຕ້ອງລາຍງານຫາ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ພາຍໃນ ສິບຫ້າ ວັນລັດຖະການ ກ່ອນຈະມອບສິດໃຫ້ແກ່ຜູ້ຮັບໃໝ່.

ຜູ້ຈະຮັບການໂອນ, ເຊົ່າ ຫຼື ຊື້ ນັ້ນ ຕ້ອງສະເໜີຕໍ່ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ແລະ ດຳເນີນການມອບໂອນ, ເຊົ່າ ຫຼື ຂາຍ ໃຫ້ສຳເລັດ ພາຍໃນ ສາມສິບ ວັນລັດຖະການ ນັບແຕ່ວັນທີ່ເຊັນສັນຍາ.

**ມາດຕາ 31 ການສືບທອດການດຳເນີນກິດຈະການໂຮງງານຜະລິດອາຫານສັດ**

ໃນກໍລະນີ ຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ຊາບ ພາຍໃນ ຫົກສິບ ວັນລັດຖະການ ນັບແຕ່ວັນທີ່ ຜູ້ດຳເນີນກິດຈະການໄດ້ເສຍຊີວິດ ແລະ ໃຫ້ດຳເນີນການກວດກາຄຸນສົມບັດ ຂອງຜູ້ຈະສືບທອດ ເພື່ອສະເໜີຂໍປ່ຽນແປງຊື່ ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ. ຖ້າຫາກບໍ່ມີຜູ້ຂໍສືບທອດພາຍໃນ ເກົ້າສິບ ວັນລັດຖະການ ຖືວ່າ ໃບອະນຸຍາດ ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ນັ້ນ ໝົດອາຍຸ. ຖ້າຫາກມີ ຜູ້ຂໍສືບທອດການດຳເນີນກິດຈະການ ຕ້ອງໄດ້ປະຕິບັດຕາມຂັ້ນຕອນການຂໍ ໃບອະນຸຍາດ ການດຳເນີນກິດຈະການໂຮງງານຜະລິດອາຫານສັດ ຄືນໃໝ່.

**ມາດຕາ 32 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ສາມາດປ່ຽນຊື່ໂຮງງານ ຫຼື ເຈົ້າຂອງໂຮງງານໄດ້ ແຕ່ຕ້ອງປະກອບເອກະສານ ສະເໜີຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ .

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ

**ມາດຕາ 33 ສິດ ຂອງຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ມີ ສິດ ດັ່ງນີ້ :

1. ເປັນເຈົ້າກຳມະສິດ ໂຮງງານຜະລິດອາຫານສັດ ແລະ ຜົນປະໂຫຍດ ທີ່ໄດ້ຮັບຈາກການດຳເນີນກິດຈະການໂຮງງານ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການໂຮງງານ;
3. ເຄື່ອນໄຫວດຳເນີນກິດຈະການຕາມຂອບເຂດທີ່ໄດ້ຮັບອະນຸຍາດໃນໃບອະນຸຍາດການດຳເນີນກິດຈະການໂຮງງານຜະລິດອາຫານສັດ;
4. ສະເໜີຂໍນະໂຍບາຍ ແລະ ການແນະນຳທາງດ້ານວິຊາການ ຈາກພາກລັດ ແລະ ພາກສ່ວນອື່ນ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍ ແລະ ຢຸດເຊົາ ກິດຈະການ ໂຮງງານຜະລິດອາຫານສັດ ຕາມກົດໝາຍ ແລະ ລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;

7. ຝຶກອົບຮົມ ແລະ ໃຫ້ຄຳແນະນຳເຕັກນິກວິຊາການ ກ່ຽວກັບ ການຜະລິດອາຫານສັດ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 34 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານຜະລິດອາຫານສັດ**

ຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ມີ ພັນທະ ດັ່ງນີ້ :

1. ສ້າງຕັ້ງໂຮງງານ ແລະ ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ;
2. ຄຸ້ມຄອງການຜະລິດ ແລະ ຄວບຄຸມຄຸນນະພາບ ຕາມມາດຕະຖານປະຕິບັດງານທີ່ດີ ສຳລັບ ໂຮງງານຜະລິດອາຫານສັດ ແລະ ມາດຕະຖານອົງການຈັດຕັ້ງສາກົນ;
3. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງ ຕາມກົດໝາຍ;
4. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນ ການໃຫ້ເງິນເດືອນ, ສະຫວັດດີການ ແລະ ການອຸດໜູນອື່ນໆ;
5. ສ້າງລະບົບການຄຸ້ມຄອງຄວາມປອດໄພ ພາຍໃນໂຮງງານ ເປັນຕົ້ນ ການປະຖົມພະຍາບານ, ການຈັດການດ້ານສິ່ງແວດລ້ອມ, ການກຳຈັດເຄມີ ທີ່ເປັນອັນຕະລາຍ ແລະ ການປ້ອງກັນອຸບັດຕິເຫດ ຕາມລະບຽບການທີ່ກ່ຽວຂ້ອງກຳນົດ;
6. ລາຍງານ ການເກີດອຸປະຕິເຫດຂັ້ນຮ້າຍແຮງ ພາຍໃນໂຮງງານຜະລິດອາຫານສັດ ໃຫ້ອົງການທີ່ກ່ຽວຂ້ອງ;
7. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
8. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບ ການເຄື່ອນໄຫວໂຮງງານຂອງຕົນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມກົດໝາຍ;
9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການປະຕິບັດໜ້າທີ່ຕາມ ສິດ ແລະ ຄວາມຮັບຜິດຊອບ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 35 ຂໍ້ຫ້າມ ສຳລັບ ຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ຫ້າມ ຜູ້ດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານຜະລິດອາຫານສັດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຜະລິດ ແລະ ຈຳໜ່າຍ ອາຫານສັດ ທີ່ບໍ່ປອດໄພ, ທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ຖືກຍົກເລີກ ທະບຽນ;
3. ນຳໃຊ້ສານທີ່ເປັນອັນຕະລາຍ ຫຼື ສານທີ່ຕ້ອງຫ້າມ ປະສົມລົງໃນ ສູດຕຳລາອາຫານສັດ;
4. ນຳໃຊ້ພາຊະນະບັນຈຸ ທີ່ບໍ່ເໝາະສົມ ສຳລັບ ການບັນຈຸ ຫຼື ຫຸ້ມຫໍ່ ອາຫານສັດ ແລະ ຕິດສະຫຼາກ ບໍ່ຖືກຕ້ອງຕາມທີ່ໄດ້ຂຶ້ນທະບຽນໄວ້;
5. ປະຕິເສດຄວາມຮັບຜິດຊອບ, ຫຼົບຫຼີກ, ບິດເບືອນ, ຂັດຂວາງ, ເຊື່ອງອຳ ການກວດກາ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່;
6. ໃຫ້ສິນບົນແກ່ ພະນັກງານ, ເຈົ້າໜ້າທີ່ ຫຼື ຮ່ວມກັນສໍ້ໂກງລັດ ແລະ ຜູ້ນຳໃຊ້ອາຫານສັດ;
7. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ;

8. ປ່ຽນຊື່ໂຮງງານຜະລິດອາຫານສັດ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານຜະລິດອາຫານສັດ ໂດຍບໍ່ໄດ້ຮັບອະນຸຍາດ;
9. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດ ບໍ່ໄດ້ມາດຕະຖານ ອອກສູ່ສະພາບແວດລ້ອມ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມ ສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ດັ່ງນີ້ :

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດຕິພີ່ນ້ອງ ແລະ ພັກພວກຕົນເອງ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ອອກເອກະສານບໍ່ຖືກຕ້ອງຕາມກົດໝາຍ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ບິດເບືອນຄວາມຈິງ, ປິດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ໂຮງງານຜະລິດອາຫານສັດ

**ມາດຕາ 37 ອົງການຄຸ້ມຄອງ ແລະ ກວດກາ ໂຮງງານຜະລິດອາຫານສັດ**

ອົງການຄຸ້ມຄອງ ແລະ ກວດກາ ໂຮງງານຜະລິດອາຫານສັດ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານອາຫານສັດ ຊຶ່ງປະກອບດ້ວຍ :

1. ກົມລ້ຽງສັດ ແລະ ການປະມົງ;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງກົມລ້ຽງສັດ ແລະ ການປະມົງ**

ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບ ການຜະລິດ ແລະ ຄຸ້ມຄອງ ອາຫານສັດ;
2. ຄົ້ນຄວ້ານຳສະເໜີ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ເຫັນດີດ້ານຫຼັກການ ກ່ຽວກັບ ການສ້າງຕັ້ງໂຮງງານຜະລິດອາຫານສັດ ແລະ ອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດອາຫານສັດ;
3. ຄົ້ນຄວ້ານຳສະເໜີ ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ;
4. ຕິດຕາມ ກວດກາ ຄຸນນະພາບ, ຄວາມປອດໄພຂອງອາຫານສັດ ແລະ ການດຳເນີນການຜະລິດ;
5. ຄົ້ນຄວ້າ ແລະ ຮັບຮອງ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຜະລິດອາຫານສັດ;
6. ສຶກສາ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ແຜນຄວາມຕ້ອງການວັດຖຸດິບປ້ອນ ໂຮງງານຜະລິດອາຫານສັດ ແລະ ຄວາມອາດສາມາດຂອງກຳລັງການຜະລິດ;

7. ຮັບຮອງ ແລະ ຢັ້ງຢືນ ການນຳເຂົ້າ ວັດຖຸດິບ, ເຄື່ອງຈັກ, ອາໄຫຼ່ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການກໍ່ສ້າງໂຮງງານ, ການຜະລິດ ແລະ ການວິໄຈ ຂອງໂຮງງານຜະລິດອາຫານສັດ;
8. ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນໂຮງງານຜະລິດອາຫານສັດ ໃນຂອບເຂດທົ່ວປະເທດ;
9. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບຜະລິດຕະພັນອາຫານສັດ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໂຮງງານຜະລິດອາຫານສັດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຊາບ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນພັດທະນາ ແລະ ຈັດຕັ້ງປະຕິບັດ ນິຕິກຳ ກ່ຽວກັບ ການຜະລິດ ແລະ ຄຸ້ມຄອງອາຫານສັດ;
2. ຄົ້ນຄວ້ານຳສະເໜີ ອົງການປົກຄອງທ້ອງຖິ່ນ ເພື່ອພິຈາລະນາ ເຫັນດີດ້ານຫຼັກການ ກ່ຽວກັບ ການສ້າງຕັ້ງໂຮງງານຜະລິດອາຫານສັດ ແລະ ອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງ ໂຮງງານຜະລິດອາຫານສັດທີ່ມີກຳລັງການຜະລິດ ໜ້ອຍກວ່າ ສີ່ພັນໂຕນ ຕໍ່ປີ;
3. ຄົ້ນຄວ້ານຳສະເໜີ ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດທີ່ມີກຳລັງການຜະລິດ ໜ້ອຍກວ່າ ສີ່ພັນໂຕນ ຕໍ່ປີ;
4. ຕິດຕາມ ກວດກາ ການດຳເນີນການຜະລິດອາຫານສັດ;
5. ຄົ້ນຄວ້າ ແລະ ຮັບຮອງ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຜະລິດອາຫານສັດ;
6. ສຶກສາ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ແຜນຄວາມຕ້ອງການວັດຖຸດິບປ້ອນເຂົ້າ ໂຮງງານຜະລິດອາຫານສັດ ແລະ ຄວາມອາດສາມາດຂອງກຳລັງການຜະລິດ;
7. ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນ ໂຮງງານຜະລິດອາຫານສັດ;
8. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບຜະລິດຕະພັນອາຫານສັດ;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໂຮງງານຜະລິດອາຫານສັດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ຊາບ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ສິດ ແລະ ໜ້າທີ່ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ບັນດານິຕິກຳ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງການຜະລິດອາຫານສັດ;
2. ສະເໜີການ ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນ ການດຳເນີນກິດຈະການໂຮງງານຜະລິດອາຫານສັດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຕິດຕາມ ກວດກາ ການດຳເນີນການຜະລິດຂອງໂຮງງານຜະລິດອາຫານສັດ ຕາມການຊີ້ນຳ ຂອງອົງການທີ່ກ່ຽວຂ້ອງ ຂັ້ນແຂວງ;
4. ຮັບຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບ ຜະລິດຕະພັນອາຫານສັດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໂຮງງານຜະລິດອາຫານສັດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນເມືອງ ຮັບຊາບ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ການກວດກາ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ**

ການກວດກາ ການດຳເນີນກິດຈະການ ໂຮງງານຜະລິດອາຫານສັດ ໃຫ້ປະຕິບັດຕາມສິດ, ໜ້າທີ່ ຂອງເຈົ້າໜ້າທີ່, ເນື້ອໃນ ແລະ ຮູບການກວດກາ ທີ່ກຳນົດໄວ້ໃນ ດຳລັດ ວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 43 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 07 ກຸມພາ 2025 ເປັນຕົ້ນໄປ.

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ